# ລາຍງານຜົນຂອງການປຶກສາຫາລື ກຸ່ມສົນທະນາ ທີ 2: ການພັດທະນາ ຊັບພະຍາກອນມະນຸດ

**ໂດຍ: ທ່ານ ປອ. ສຳລານ ພັນຄະວົງ**

**ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ**

**ກອງປະຊຸມໂຕະມົນປະຈຳປີ 2024**

**14 ພະຈິກ 2024**

# ເນື້ອໃນ

1. ສິ່ງທ້າທາຍອັນຮີບດ່ວນທີ່ສຸດ
2. ຂໍ້ແນະນຳ ແລະ ທິດທາງແກ້ໄຂໃນຕໍ່ໜ້າ

**ສຳລັບ:**

- ❖ ງົບປະມານ
- ❖ ການສຶກສາ
- ❖ ສາທາລະນະສຸກ
- ❖ ການປົກປ້ອງສັງຄົມ

# ສິ່ງທ້າທາຍອັນຮີບດ່ວນທີ່ສຸດ

## ດ້ານງົບປະມານ

1) ການລົງທຶນຂອງລັດຖະບານ ໃຫ້ແກ່ຂະແໜງການສັງຄົມ ຍັງຕ່ຳ ແລະ ບໍ່ພຽງພໍ (ການສຶກສາ, ສາທາລະນະສຸກ ແລະ ການປົກປ້ອງທາງສັງຄົມ) ເຊິ່ງເປັນສິ່ງກີດຂວາງຄວາມຄືບໜ້າໃນການບັນລຸເປົ້າໝາຍທີ່ກຳນົດໄວ້ ກໍ່ຄື ການພັດທະນາຊັບພະຍາກອນມະນຸດໃຫ້ດີຂຶ້ນ;
2) ການລົງທຶນທີ່ຈຳກັດ ເຂົ້າໃນຂະແໜງການສາທາລະນະສຸກ ລວມທັງບັນຫາການຂາດສານອາຫານເນື່ອງຈາກການສະໜອງງົບປະມານທີ່ຈຳກັດເຂົ້າໃນວຽກງານສາທາລະນະສຸກ ແລະ ການປະສານງານ ຂອງການສະໜັບສະໜູນຂອງຄູ່ຮ່ວມພັດທະນາ ທີ່ຍັງບໍ່ມີປະສິດທິພາບພຽງພໍ ລວມໄປເຖິງການຂາດການຕິດຕາມ ແລະ ການລາຍງານງົບປະມານ ແລະ ລາຍຈ່າຍດ້ານໂພຊະນາການ;
3) ງົບປະມານທີ່ບໍ່ພຽງພໍ ໃນການສະໜັບສະໜູນ ບັນດາແຜນງານການປົກປ້ອງສັງຄົມ ເຊັ່ນດຽວກັບການພັດທະນາຊັບພະຍາກອນມະນຸດ.

# ສິ່ງທ້າທາຍອັນຮີບດ່ວນທີ່ສຸດ (ຕໍ່)

## ດ້ານການສຶກສາ

1) ການເຂົ້າຮຽນຂອງນັກຮຽນ ແລະ ນັກສຶກສາ ສືບຕໍ່ຫຼຸດລົງຢ່າງຫຼວງຫຼາຍ ແລະ ການປະລະການຮຽນກໍເພີ່ມຂຶ້ນສູງ ເຊິ່ງຕົ້ນຕໍ ແມ່ນເປັນຜົນມາຈາກ ຄວາມຕ້ອງການໃນການສຶກສາຫຼຸດລົງ;
2) ຜົນການຮຽນຂອງນັກຮຽນຍັງຕ່ຳ ຢ່າງຕໍ່ເນື່ອງ. ນັກຮຽນໃນຊັ້ນປະຖົມສຶກສາ ມີລະດັບຄວາມຮູ້ໂດຍສະເລ່ຍ 3 ເຖິງ 4 ຂັ້ນຮຽນຊ້າກວ່າລະດັບທີ່ກຳນົດໄວ້ ແລະ ສິ່ງນີ້ສົ່ງຜົນກະທົບ ຕໍ່ການສຶກສາໃນລະດັບມັດທະຍົມ ແລະ ລະດັບທີ່ສູງຂຶ້ນໄປ;
3) ຄວາມບໍ່ເທົ່າທຽມກັນໃນການເຂົ້າເຖິງ ແລະ ການຮຽນຮູ້ ພ້ອມທັງບັນຫາຄວາມບໍ່ສະເໝີພາບທີ່ເພີ່ມຂຶ້ນ;
4) ການຂາດແຄນຄູເພີ່ມຂຶ້ນ ແລະ ຂີດຄວາມສາມາດຂອງຄູທີ່ຍັງຕ່ຳ;
5) ການສຶກສາ ແລະ ການຝຶກອົບຮົມ ທີ່ມີຄວາມສອດຄ່ອງ ກັບຄວາມຕ້ອງການຕະຫຼາດແຮງງານແມ່ນຍັງມີຢ່າງຈຳກັດ.

# ສິ່ງທ້າທາຍອັນຮີບດ່ວນທີ່ສຸດ (ຕໍ່)

## ດ້ານສາທາລະນະສຸກ

1) ພາວະການຂາດສານອາຫານສອງດ້ານ: ອັດຕາຂອງການຂາດສານອາຫານສູງ ຫຼື ພາວະການຂາດສານອາຫານແມ່ນມັກພົບເຫັນໄດ້ໃນກຸ່ມແມ່ຍິງ ແລະ ເດັກນ້ອຍ ໃນພື້ນທີ່ຫ່າງໄກສອກຫຼີກ ທີ່ເຂົ້າເຖິງຍາກ, ໃນຂະນະທີ່ມີຄວາມກັງວົນທີ່ເພີ່ມຂຶ້ນກ່ຽວກັບອາຫານທີ່ບໍ່ເປັນຜົນດີ ທີ່ເປັນສາເຫດກໍ່ໃຫ້ເກີດພະຍາດບໍ່ຕິດຕໍ່;
2) ຂໍ້ມູນ ທີ່ລະບຸກຸ່ມເປົ້າຫມາຍແມ່ນມີຄວາມຈໍາກັດ ເປັນຕົ້ນ (ອາຍຸ, ເພດ, ພື້ນທີ່ທາງພູມສາດ) ແລະ ການຕິດຕາມການດໍາເນີນການ ໃນການມອບອຸປະກອນ ແລະ ການບໍລິການດ້ານສຸຂະພາບທີ່ຈໍາເປັນ ລວມທັງການສະໜອງອາຫານທີ່ມີປະໂຫຍດ ໃຫ້ແກ່ຜູ້ທີ່ມີຄວາມຕ້ອງການ ເຊັ່ນ ປະຊາກອນຜູ້ທີ່ມີຄວາມສ່ຽງຫຼາຍທີ່ສຸດ;
3) ການຮ່ວມມື ແມ່ນຍັງບໍ່ພຽງພໍ ເນື່ອງຈາກ ພາກສ່ວນ ສາທາລະນະສຸກ ເປັນຕົ້ນ (ລະຫວ່າງກະຊວງ/ພາກສ່ວນທີ່ກ່ຽວຂ້ອງ, ພາກລັດ ແລະ ເອກະຊົນ) ຕ້ອງຮອງຮັບບັນຫາທີ່ຄວນເອົາໃຈໃສ່ຮ່ວມກັນ ເຊັ່ນ ບັນຫາການຂາດສານອາຫານ.

# ສິ່ງທ້າທາຍອັນຮີບດ່ວນທີ່ສຸດ (ຕໍ່)

## ດ້ານການປົກປ້ອງສັງຄົມ

1) ການເຕີບໂຕດ້ານເສດຖະກິດ ບໍ່ສາມາດກະຈາຍຜົນປະໂຫຍດໄປສູ່ທຸກພາກສ່ວນຂອງສັງຄົມ ໄດ້ເທົ່າທຽມກັນ ເຮັດໃຫ້ເກີດມີຄວາມແຕກໂຕນດ້ານລາຍຮັບ ໃນຊຸມປີຜ່ານມາ;
2) ການປົກຄຸມປະກັນສັງຄົມ ກວມເອົາພຽງ 11,18% ຂອງຈຳນວນປະຊາກອນ ຊຶ່ງເຮັດໃຫ້ ແຮງງານນອກລະບົບ ຊຶ່ງກວມເອົາກຳລັງແຮງງານສ່ວນໃຫ່ຍຂອງປະເທດ ຍັງຕົກຢູ່ໃນຄວາມສ່ຽງ;
3) ຂອດການປະສານງານ ລະຫວ່າງສາມເສົາຄ້ຳພາຍໃນແຜນຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ຍັງມີຫຼາຍສິ່ງທ້າທາຍ ເປັນຕົ້ນ: ບັນຫາການເກັບກຳຂໍ້ມູນ, ການຂຶ້ນແຜນງົບປະມານ ແລະ ການກຳນົດພື້ນທີ່ກຸ່ມເປົ້າໝາຍ ກໍຄື ພື້ນທີ່ເປົ້າໝາຍຂອງ ແຜນງານ/ໂຄງການ.
4) ງົບປະມານ ແລະ ບຸກຄະລາກອນ ໃນຂົງເຂດວຽກປົກປ້ອງສັງຄົມ ຍັງບໍ່ທັນພຽງພໍ ທາງດ້ານປະມານ ແລະ ຄຸນນະພາບ.

# ຂໍ້ແນະນຳ ແລະ ທິດທາງແກ້ໄຂໃນຕໍ່ໜ້າ

## ດ້ານງົບປະມານ

1) ນອກຈາກງົບປະມານຂອງລັດຖະບານ, ໂຄງການລົງທຶນຂະໜາດໃຫຍ່ລະດັບຊາດ ຫຼື ໂຄງການລົງທຶນ ທີ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມນັ້ນ, ຄວນໄດ້ຈ່າຍເງິນຊ່ວຍໜູນເຂົ້າໃນການພັດທະນາຊັບພະຍາກອນມະນຸດ ກໍຄືວັດທະນະທຳ-ສັງຄົມ ຢ່າງເໝາະສົມ ແລະ ເປັນຮູບປະທຳ;
2) ຄວນສືບຕໍ່ຍາດແຍ່ງການຮ່ວມມື, ຊ່ວຍເຫຼືອລ້າ ແລະ ກູ້ຢືມບໍ່ມີດອກເບ້ຍ ຫຼື ດອກເບ້ຍຕ່ຳ ມາພັດທະນາເຂົ້າໃນຂົງເຂດວັດທະນະທຳ-ສັງຄົມໃຫ້ຫຼາຍກວ່າເກົ່າ;
3) ເພີ່ມທະວີການລົງທຶນເຂົ້າໃນບັນດາຂະແໜງການສັງຄົມຕາມຄຳໝັ້ນສັນຍາ ແລະ ກົດໝາຍຂອງລັດຖະບານ;
4) ໃຫ້ມີຫຼາກຫຼາຍແຫຼ່ງທຶນ ລວມທັງ ຈາກພາສີອາກອນ ແລະ ເພີ່ມການນຳໃຊ້ລະບົບຕິດຕາມການເງິນໃຫ້ເກີດປະໂຫຍດສູງສຸດ ເພື່ອການລາຍງານທີ່ໂປ່ງໃສ ແລະ ຄຸ້ມຄອງງົບປະມານໃຫ້ມີປະສິດທິພາບ;
5) ການລົງທຶນໃສ່ໂຄງການປົກປ້ອງສັງຄົມ ເພື່ອປ້ອງກັນບໍ່ໃຫ້ຄອບຄົວຕ້ອງກັບໄປທຸກຍາກ ຍ້ອນຜົນກະທົບທາງເສດຖະກິດທີ່ບໍ່ຄາດຄິດ, ວິກິດການກ່ຽວກັບດິນຟ້າອາກາດ, ຫຼື ພາວະສຸກເສີນດ້ານສຸຂະພາບ.

# ຂໍ້ແນະນໍາ ແລະ ທິດທາງແກ້ໄຂໃນຕໍ່ໜ້າ (ຕໍ່)

## ດ້ານການສຶກສາ

1) ມີວິທີການທີ່ມີຄວາມຢືດຢຸ່ນໃນພັດທະນາຊັບສິນມະນຸດ ໂດຍຜ່ານການເຜີຍແຜ່ຄວາມເຂົ້າໃຈ ແລະ ກຽມພ້ອມດ້ວຍວິທີການທີ່ເໝາະສົມ;
2) ໃຫ້ບຸລິມະສິດໃນການສະໜອງການສຶກສາໃຫ້ແກ່ເດັກອາຍຸ 5 ປີ ລວມທັງ ການສະໜອງໃນຮູບແບບຕ່າງໆ (ເປັນຕົ້ນແມ່ນ: ການກຽມຄວາມພ້ອມກ່ອນເຂົ້າຮຽນໂດຍຊຸມຊົນເປັນເຈົ້າການ, ການກຽມຄວາມພ້ອມ 10 ອາທິດ); ແກ້ໄຂຄວາມຕ້ອງການ ການສະໜັບສະໜູນຂອງຊຸມຊົນ ແລະ ຄອບຄົວ ລວມທັງການສ້າງຄວາມເຂັ້ມແຂງ;
3) ລົງທຶນໃສ່ ການສະໜັບສະໜູນການສອນພາສາລາວ ໃຫ້ແກ່ເດັກນ້ອຍທີ່ບໍ່ແມ່ນກຸ່ມລາວ-ໄຕ ໃນຊັ້ນປະຖົມສຶກສາຂັ້ນຕົ້ນ (ປ.1 ແລະ ປ.2);
4) ຂະຫຍາຍການສະໜອງເບ້ຍລ້ຽງໃຫ້ແກ່ເດັກທີ່ດ້ອຍໂອກາດ ເພື່ອເພີ່ມການເຂົ້າຮຽນ;
5) ການເພີ່ມໂກຕ້າຄູ ແມ່ນເປັນສິ່ງສໍາຄັນຫຼາຍ ຄຽງຄູ່ກັບການພັດທະນາລະບົບ ທີ່ມີຄວາມຍືດຢຸ່ນ ແລະ ມີປະສິດທິຜົນຫຼາຍຂຶ້ນ ໃນການຈັດສັນ-ສັບຊ້ອນຄູ ແລະ ການຮັບຄູສັນຍາຈ້າງ;

# ຂໍ້ແນະນຳ ແລະ ທິດທາງແກ້ໄຂໃນຕໍ່ໜ້າ (ຕໍ່)

6) ລົງທຶນ ເຂົ້າໃສ່ການພັດທະນາ ແລະ ຈັດຕັ້ງປະຕິບັດຮູບແບບການພັດທະນາວິຊາຊີບຄູ ທີ່ນຳໃຊ້ນະວັດຕະກຳໃໝ່ໆ ແລະ ວິທີການທີ່ມີປະສິດທິພາບໃນການພັດທະນາຄູ;
7) ປະເມີນຄວາມເປັນໄປໄດ້ໃນການແບ່ງສາຍຮຽນໃນຊັ້ນມັດທະຍົມສຶກສາຕອນປາຍ ອອກເປັນສອງສາຍຄື: ສາຍວິທະຍາສາດທຳມະຊາດ ແລະ ສາຍວິທະຍາສາດສັງຄົມ;
8) ສຳເລັດ ແລະ ດຳເນີນການຈັດຕັ້ງປະຕິບັດ ກອງທຶນພັດທະນາອາຊີວະສຶກສາ ເພື່ອລະດົມທຶນເພີ່ມຕື່ມ ເຂົ້າໃສ່ການປັບປຸງຄຸນນະພາບຂອງອາຊີວະສຶກສາ;
9) ມີການສ້າງ ແລະ ຝຶກອົບຮົມສະເພາະດ້ານ ສຳລັບຄູຊັ້ນມັດທະຍົມສຶກສາ  ເພື່ອໃຫ້ສາມາດສອນໄດ້ຫຼາຍວິຊາ;
10) ຫັນເອົາຄູສອນຊັ້ນມັດທະຍົມສຶກສາທີ່ຍັງເຫຼືອ ມາຊ່ວຍສອນຊັ້ນປະຖົມສຶກສາ ໂດຍໃຫ້ມີການຝຶກອົບຮົມເນື້ອໃນຂອງຫຼັກສູດຊັ້ນປະຖົມສຶກສາໃຫ້ແກ່ພວກເຂົາ.

# ຂໍ້ແນະນຳ ແລະ ທິດທາງແກ້ໄຂໃນຕໍ່ໜ້າ (ຕໍ່)

## ດ້ານສາທາລະນະສຸກ

1. ໃຫ້ບຸລິມະສິດ ການຫຼຸດຜ່ອນການຂາດສານອາຫານໃນແຜນພັດທະນາສາທາລະນະສຸກ 5 ປີ ຄັ້ງທີ 10 ແລະ ຮັບປະກັນການເຂົ້າເຖິງການບໍລິການສຸຂະພາບທີ່ຈຳເປັນຢ່າງສະເໝີພາບ, ລວມທັງການບໍລິການດ້ານໂພຊະນາການ ແລະ ພະຍາດທີ່ບໍ່ຕິດຕໍ່ ໂດຍສະເພາະແມ່ນແມ່ຍິງ, ເດັກນ້ອຍ ແລະ ກຸ່ມທີ່ມີຄວາມສ່ຽງ;
2. ຍຸດທະສາດການລົງທຶນໃນຊັບພະຍາກອນທີ່ມີຈຳກັດ, ຄວນມີການຈັດຕັ້ງປະຕິບັດ ແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ (NPAN) ໃຫ້ມີປະສິດຕິຜົນ ໂດຍການປັບປຸງປະສິດທິພາບ ແລະ ຄວາມຮັບຜິດຊອບຂອງຂະແໜງການ ໂດຍຫຼຸດຜ່ອນການສະໜັບສະໜູນໂຄງການທີ່ບໍ່ຕໍ່ເນື່ອງກັນ / ທາງດ້ານການເງິນ ຄວນຫຼີກຫຼ່ຽງຄວາມຊໍ້າຊ້ອນຂອງ ໂຄງການທີ່ກ່ຽວຂ້ອງກັບໂພຊະນາການ, ການສັກຢາປ້ອງກັນພະຍາດ ແລະ ແຜນງານສຸຂະພາບແມ່ ແລະ ເດັກຂອງກະຊວງສາທາລະນະສຸກ ແລະ ຄູ່ຮ່ວມພັດທະນາ;
3. ສ້າງຄວາມເຂັ້ມແຂງ ລະບົບການຕິດຕາມ ແລະ ປະເມີນຜົນ ເພື່ອກຳນົດ ແລະ ແກ້ໄຂຊ່ອງຫວ່າງໃນການລົງທຶນ ແລະ ການຈັດຕັ້ງປະຕິບັດ ແຜນພັດທະນາສາທາລະນະສຸກ 5 ປີ ຄັ້ງທີ 10 ແລະ ແຜນປະຕິບັດງານແຫ່ງຊາດດ້ານໂພຊະນາການ;
4. ເລັ່ງລັດການຮ່ວມມືຫຼາຍຂະແໜງການ ແລະ ພາກລັດ ແລະ ເອກະຊົນ, ໃນບັນດາກະຊວງຕ່າງໆ ເພື່ອປັບປຸງວຽກງານໂພຊະນາການ ແລະ ຜົນໄດ້ຮັບດ້ານສຸຂະພາບເປັນບູລິມະສິດໃນການພັດທະນາຊັບສິນມະນຸດ.

# ຂໍ້ແນະນຳ ແລະ ທິດທາງແກ້ໄຂໃນຕໍ່ໜ້າ (ຕໍ່)

## ດ້ານການປົກປ້ອງສັງຄົມ

1) ຂະຫຍາຍອັດຕາປົກຄຸມປະກັນສັງຄົມເຂົ້າສູ່ແຮງງານເຄື່ອນຍ້າຍ;
2) ສ້າງຖານງົບປະມານ ແມ່ນເປັນສິ່ງຈຳເປັນໃນການສະໜອງການບໍລິການ ໃຫ້ແກ່ປະຊາກອນໝົດທຸກຄົນ ໂດຍສະເພາະ ກຸ່ມຄົນດ້ອຍໂອກາດ ຢູ່ເຂດຫ່າງໄກສອກຫຼີກ;
3) ການຄຸ້ມຄອງລະບົບຂໍ້ມູນ ແມ່ນມີບົດບາດສຳຄັນໃນການອອກແບບ/ສະໜອງການບໍລິການ ໃນລະບົບປົກປ້ອງສັງຄົມ ທີ່ມີປະສິດທິຜົນ;
4) **ການເຊື່ອມສານວຽກປົກປ້ອງສັງຄົມ ເຂົ້າໃນວາລະການການພັດທະນາແຫ່ງຊາດ;**
5) ເພີ່ມທະວີການຮ່ວມມືກັບບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ໃນການຍົກລະດັບ ການຮ່ວມມື ຈັດຕັ້ງປະຕິບັດ ແຜນຍຸດທະສາດປົກປ້ອງສັງຄົມແຫ່ງຊາດ ໃຫ້ປະກົດຜົນເປັນຈິງ;
6) ສ້າງການເຊື່ອມສານ ລະບົບຂໍ້ມູນຂ່າວສານ ແລະ ສ້າງຄວາມເຂັ້ມແຂງການປະສານງານ ລະຫວ່າງບັນດາກະຊວງຂະແໜງການ ເພື່ອຮັບປະກັນໃຫ້ ເປັນລະບົບທີ່ກົມກຽວກັນ.

# ຂໍ້ແນະນຳ ແລະ ທິດທາງແກ້ໄຂໃນຕໍ່ໜ້າ (ຕໍ່)

## ການຊ່ວຍເຫຼືອເພື່ອການພັດທະນາ

1) ບັນດາຄູ່ຮ່ວມພັດທະນາ ບໍ່ອາດສາມາດ ຫຼື ບໍ່ຄວນຖືກຄາດຫວັງວ່າ ຈະອັດຊ່ອງຫວ່າງທາງການເງິນຢ່າງຫຼວງຫຼາຍທີ່ມີໄດ້ - ຄວາມຍືນຍົງແມ່ນເປັນສິ່ງທີ່ຈຳເປັນ;

2) ບັນດາຄູ່ຮ່ວມພັດທະນາ ຄວນໃຫ້ການສະໜັບສະໜູນ ໃນຮູບແບບຂອງການແນະນຳທາງດ້ານນະໂຍບາຍ, ການສ້າງນະວັດຕະກຳໃໝ່ໆ, ການຄຸ້ມຄອງລະບົບ ແລະ ຂໍ້ມູນຂ່າວສານ ລວມໄປເຖິງ ການເສີມຂະຫຍາຍທາງດ້ານຂີດຄວາມອາດສາມາດ;

3) ບັນດາຄູ່ຮ່ວມພັດທະນາ ສາມາດໃຫ້ການຊ່ວຍເຫຼືອແກ່ລັດຖະບານ ໃນການວິເຄາະ ທາງດ້ານຄວາມເປັນໄປໄດ້ ແລະ ເພື່ອຄວາມຍືນຍົງ ທີ່ເນັ້ນໃສ່ການກຳນົດຍຸດທະສາດທີ່ເປັນບຸລິມະສິດ ແລະ ແນວທາງທີ່ດີທີ່ສຸດ ໃນການຈັດຕັ້ງປະຕິບັດເພື່ອໃຫ້ບັນລຸເປົ້າໝາຍ ແລະ ຄົງຮັກສາໄວ້ໃຫ້ຍືນຍົງ;

4) ບັນດາຄູ່ຮ່ວມພັດທະນາ ສາມາດຊ່ວຍເຫຼືອໃນການເສີມຂະຫຍາຍ ວິທີການກຳນົດນະໂຍບາຍ ໂດຍມີການວາງແຜນນະໂຍບາຍທີ່ອີງໃສ່ຫຼັກຖານຂໍ້ມູນ ໂດຍສຸມໃສ່ ການບັນລຸ ຍຸດທະສາດ ຜົນໄດ້ຮັບ ໃນຂະແໜງການສັງຄົມ;

5) ຫຼາຍຄັ້ງທີ່ ຄູ່ຮ່ວມພັດທະນາໃຫ້ການສະໜັບສະໜູນ ໃນຫຼາກຫຼາຍວຽກ ແລະ ຫຼາຍຂໍ້ລິເລີ່ມ ເຊິ່ງບາງຄັ້ງກໍ່ເປັນຄວາມຮຽກຮ້ອງຕ້ອງການຈາກລັດຖະບານ. 'ການເຮັດຫຼາຍເກີນໄປ' ສິ່ງຜົນໃຫ້ປະສິດທິພາບຫຼຸດລົງ ແລະ ການຈັດຕັ້ງປະຕິບັດກໍ່ໜ້ອຍລົງ. **ການເຮັດໜ້ອຍອາດເຮັດໃຫ້ໄດ້ຮັບຜົນຫຼາຍ**

# ຂໍຂອບໃຈ